ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສໍານັກງານໃຫຍ່

ເລກທີ: 1004 /ທຄຕລ.2025
ນະຄອນຫຼວງວຽງຈັນ, ວັນທີ: 01 APR 2025

# ໜັງສືແຈ້ງເຊີນ

**ເຖິງ**: ບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈໍາໜ່າຍ ໃນນະຄອນຫຼວງວຽງຈັນ.

**ເລື່ອງ**: ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາບໍາລຸງຮັກສາ ໝໍ້ເກັບໄຟ UPS ຈໍານວນ 07 ເຄື່ອງ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈໍາໜ່າຍ, ເພື່ອເຂົ້າຮ່ວມປະມູນລາຄາໃນການບໍລິການຮັບເໝົາ ບໍາລຸງຮັກສາໝໍ້ເກັບໄຟ UPS ຂອງ ທຄຕລ ເພື່ອຮັບປະກັນການໃຊ້ງານອຸປະກອນໄຟຟ້າສໍາຮອງ. ດັ່ງນັ້ນ, ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນລາຄາ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

| ລໍາດັບ | ລາຍການ | Serial Number | ສະຖານທີ່ |
|---|---|---|---|
| 1 | APC Smart-UPS VT 30kVA | PS0542341090 | ສໍານັກງານໃຫຍ່ ຕຶກ A |
| 2 | APC Smart-UPS VT 40kVA | QS1640151549 | ສໍານັກງານໃຫຍ່ ຕຶກ A |
| 3 | APC Symmetra PX 160kVA (96kVA) | PD1246150071 | ສໍານັກງານໃຫຍ່ ຕຶກ A |
| 4 | APC Smart-UPS VT 40kVA | QS1936150996 | ສໍານັກງານໃຫຍ່ ຕຶກ D |
| 5 | APC Galaxy VS 80kVA | BD1944001409 | ສໍານັກງານໃຫຍ່ ຕຶກ A |
| 6 | APC Galaxy VS 80kVA | BA1943006114 | ສໍານັກງານໃຫຍ່ ຕຶກ A |
| 7 | APC Smart-UPS VT 40kVA | QS1936350976 | Call Center |

❖ **ໝາຍເຫດ**: ບໍລິສັດສາມາດເຂົ້າມາສໍາຫລວດ ແລະ ສອບຖາມຂໍ້ມູນໄດ້ ນັບຕັ້ງແຕ່ ວັນທີ 01/04/2025 ເຖິງ 09/04/2025 ໃນວັນເວລາໂມງລັດຖະການ.

**ເງື່ອນໄຂ ແລະ ໜ້າທີ່ຂອງຜູ້ໃຫ້ບໍລິການໃນການບໍາລຸງຮັກສາ ໝໍ້ເກັບໄຟ UPS ມີດັ່ງນີ້:**

- ຕ້ອງເປັນບໍລິສັດທີ່ມີປະສົບການ, ມີຜົນງານການຕິດຕັ້ງ ແລະ ບໍາລຸງຮັກສາໃຫ້ບັນດາອົງກອນ ຫຼື ໂຄງການ ຢ່າງໜ້ອຍ 03 ປີຂຶ້ນໄປ.
- ຕ້ອງມີເອກະສານຢັ້ງຢືນພະນັກງານຜູ້ຊ່ຽວຊານສະເພາະດ້ານຈາກ Schneider Electric ທີ່ຍັງບໍ່ໝົດອາຍຸ.
- ການບໍາລຸງຮັກສາໃນແຕ່ລະຄັ້ງຕ້ອງມີຊ່ຽວຊານສະເພາະດ້ານຈາກ Schneider Electric ເຂົ້າຮ່ວມນໍາທຸກຄັ້ງ ແລະ ສາມາດໃຫ້ການຊັບພອດແກ້ໄຂບັນຫາຜ່ານທາງ Online ແລະ On site.(ບໍລິສັດ ກໍານົດມາ)
- ຕ້ອງເປັນບໍລິສັດທີ່ສາມາດເປີດ Ticket ນໍາບໍລິສັດຜູ້ຜະລິດ ຫຼື Global Support ໄດ້.
- ຕ້ອງຕິດຄັດມາດຖານເຕັກນິກຂອງໜ້າວຽກທີ່ຕິດພັນກັບການບໍາລຸງຮັກສາມາພ້ອມ.
- ໃຫ້ການບໍາລຸງຮັກສາ, ຊັບພອດແກ້ໄຂບັນຫາເຕັກນິກ, ລາຍງານສະພາບເຄື່ອງ UPS ແລະ ອຸປະກອນທີ່ຕິດພັນເຊັ່ນ: Battery, ຕູ້ MDB, External Bypass.

ເລກທີ 01, ຖະໜົນ: ປາງຄໍາ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

- ກວດເຊັກໄຟຟ້າຂາເຂົ້າ-ຂາອອກ, ລະບົບສາຍດິນ ຂອງ UPS ແລະ ບັນທຶກລາຍລະອຽດຕ່າງໆທີ່ຕິດພັນກັບຕົວເຄື່ອງ.
- ກວດເຊັກພື້ນຖານຂອງເຄື່ອງ ເຊັ່ນ: ການຕັ້ງຄ່າຂອງເຄື່ອງ, ການອັບເກດ Firmware ແລະ ອື່ນໆ ຕາມມາດຕະຖານເຕັກນິກ.
- ກວດ Log ຍ້ອນຫຼັງ, ກວດອຸປະກອນ Power Module, Bypass, Battery ແລະ ອຸປະກອນອື່ນໆຂອງເຄື່ອງ UPS.
- ທຳການ Self-Test ຕົວເຄື່ອງ, Battery ແລະ ບຳລຸງຮັກສາອານາໄມພາຍໃນ ແລະ ພາຍນອກຕົວເຄື່ອງ.
- ສະຫຼຸບລາຍງານໃຫ້ ທຄຕລ ໃນການບຳລຸງຮັກສາແຕ່ລະຄັ້ງ ແລະ ເຂົ້າມາບຳລຸງຮັກສາຢ່າງໜ້ອຍ 4 ຄັ້ງ/ປີ ເຖິງວ່າຈະມີບັນຫາ ຫຼື ບໍ່ມີບັນຫາກໍ່ຕາມ ແລະ ໜ້າວຽກອື່ນໆທີ່ຈຳເປັນໃນການບຳລຸງຮັກສາ UPS ໃຫ້ບໍລິສັດລະບຸມາລະອຽດ.

- **ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນດັ່ງກ່າວມີຄວາມຕ້ອງການຍື່ນຊອງປະມູນລາຄາຕ້ອງປະກອບເອກະສານໃຫ້ຄົບຖ້ວນດັ່ງລຸ່ມນີ້:**

  - **<u>ເອກະສານ ຊອງທີ1</u>:**

1. ປະກອບເອກະສານໃບນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງອຸປະກອນໄອທີ ຫຼື ໄຟຟ້າ, ດຳເນີນທຸລະກິດ ຢ່າງໜ້ອຍ 03 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2023 ຫຼື 2024.
2. ໃບຢັ້ງຢືນການເປັນຕົວແທນຈຳໜ່າຍຈາກບໍລິສັດຜູ້ສະໜອງຍີ່ຫໍ້ APC ປະເທດລາວ ແລະ ຍັງບໍ່ໝົດອາຍຸຂອງສັນຍາ.
3. ເອກະສານລາຍລະອຽດສະເປັກໜ້າວຽກ, ການຮັບປະກັນ ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້.
4. ເອກະສານຂ້າງເທິງແມ່ນໃຫ້ຍື່ນກ່ອນ ວັນພຸດ **ວັນທີ 09/04/2025 ເວລາ 15:00 ໂມງ** ໂດຍການສົ່ງຟາຍເຂົ້າ E-mail: procurement@bcel.com.la ແລະ inspect-it@bcel.com.la ເພື່ອໃຫ້ສູນໄອທີໄດ້ກວດສະເປັກ.

  - **<u>ເອກະສານ ຊອງທີ2</u>: (ປິດຊອງ)**

1. ໃບສະເໜີລາຄາຕ້ອງເປັນສະກຸນເງິນກີບ ແລະ ລວມອາກອນມູນຄ່າເພີ່ມ 10%, ໃບສະເໜີລາຄາຂອງຜູ້ສະໜອງມີອາຍຸຢ່າງໜ້ອຍ 01 ເດືອນ ຫລັງຈາກມື້ຍື່ນຊອງປະມູນ.
2. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 20% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 24/07/2025)** ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.
3. ໃນວັນພະຫັດ **ວັນທີ 24/04/2025 ຕອນບ່າຍ ເວລາ 13:30 ໂມງ** ແມ່ນມື້ເປີດຊອງປະມູນ ສະນັ້ນ, ໃຫ້ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 5 ອາຄານ C.

- **<u>ໝາຍເຫດ</u>:**

- ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ, ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫລາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

**ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.
- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 20% ຂອງມູນຄ່າລວມທີ່ສະເໜີປະມູນ.

**ການຊຳລະແມ່ນແບ່ງອອກເປັນ 04 ງວດ ດັ່ງລຸ່ມນີ້:**

- **ງວດທີ 1**: ຊຳລະ 25% ຂອງມູນຄ່າ ພາຍໃນ 15 ວັນ ພາຍຫຼັງທີ່ເຂົ້າມາບຳລຸງຮັກສາ ແລະ ກວດກາຄວາມຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ.
- **ງວດທີ 2**: ຊຳລະ 25% ຂອງມູນຄ່າ ພາຍໃນ 15 ວັນ ພາຍຫຼັງທີ່ເຂົ້າມາບຳລຸງຮັກສາ ແລະ ກວດກາຄວາມຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ.
- **ງວດທີ 3**: ຊຳລະ 25% ຂອງມູນຄ່າ ພາຍໃນ 15 ວັນ ພາຍຫຼັງທີ່ເຂົ້າມາບຳລຸງຮັກສາ ແລະ ກວດກາຄວາມຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ.
- **ງວດທີ 4:** ຊຳລະ 25% ຂອງມູນຄ່າ ພາຍໃນ 15 ວັນ ພາຍຫຼັງທີ່ເຂົ້າມາບຳລຸງຮັກສາ ແລະ ກວດກາຄວາມຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ແຂວງ ສປປ ລາວ ນະຄອນຫລວງ ວຽງຈັນ

ນ. ສາຍສະໝອນ ຈັນທະຈັກ

# (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............./ທຄຕລ, ລົງວັນທີ .......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | ໝາຍເຫດ |
|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ | ໂປຼແກຼມທົວ | |
| 1 | ບ/ສ......... | (ເລກທີ/ ລົງວັນທີ) | (ເລກທີ/ ລົງວັນທີ) | (ເລກທີ/ ລົງວັນທີ) | .... ປີ | (ໃຫ້ລະບຸ) | | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ .......................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: